# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 4 ມິຖຸນາ 2017 (06-04-2017)

# ຈົ່ງຮັກເໝືອນອົງພຣະເຢຊູ

ທ່ານໄດ້ເຫັນເທັກໂນໂລຢີປ່ຽນວິຖີທາງຄວາມສັມພັນຂອງເຮົາກັບຄົນອື່ນຢ່າງໃດ?

**ຈຸດສຳຄັນໃນບົດຮຽນ**: ໃຫ້ທຸກຄວາມສັມພັນຕັ້ງຢູ່ເທິງພື້ນຖານແຫ່ງຄວາມຮັກທີ່ບໍ່ມີຂໍ້ຜູກມັດຂອງອົງພຣະຄຣິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ທ່ານໄດ້ເຄີຍສັງເກດເຫັນບໍ່ວ່າມີຄົນຫຼາຍຂຶ້ນເລື້ອຍໆໄດ້ສົນທະນາດ້ວຍໂທຣະສັບມືຖື ແທນທີ່ຈະໂອ້ລົມສົນທະນາກັບຄົນຢູ່ອ້ອມຂ້າງໂດຍໜ້າຕໍ່ໜ້າ ຕາຕໍ່ຕາ?

ນັກຈິດຕະສາດ ເຊີລີ ທັກເກີ້ນໄດ້ສັງເກດເຫັນຜົນກະທົບຂອງການສົ່ງຂໍ້ຄວາມໂດຍໂທຣະສັບມືຖື(texting), ອີເມລ໌, ສັງຄົມສື່ມວນຊົນ ກ່ຽວກັບຄວາມສາມາດຂອງພວກເຮົາໃນການສົນທະນາດ້ວຍຄວາມສັດຊື່ແລະຄວາມສັມພັນທີ່ເລິກເຊິ່ງ. ເຊີລີ ທັກເກີ້ນ ໄດ້ເວົ້າວ່າ "ໃນບ່ອນເຮັດການປັດຈຸບັນ, ພວກເຍົາວະຊົນຊຶ່ງກຳລັງເຕີບໃຫຍ່ມີຄວາມຢ້ານກົວໃນເຣື່ອງສົນທະນາຕອນເຮັດວຽກໂດຍການສວມໃສ່ຫູຟັງ(earphone)". "ພວກເຮົາຢູ່ຮ່ວມກັນ, ແຕ່ວ່າແຕ່ລະຄົນຢູ່ໃນໂລກນ້ອຍໆຂອງໃຜລາວ ຊຶ່ງເຊື່ອມຕໍ່ໂດຍແປ້ນພິມແລະໜ້າຈໍສັມຜັດ(keyboard and touch screen)". ເທັກໂນໂລຢີໄດ້ໃຫ້ສິ່ງທີ່ດີຫຼາຍຢ່າງແກ່ໂລກ, ແຕ່ບໍ່ຈຳເປັນຈະໝາຍເຖິງໂລກທີ່ດີກວ່າ. ພວກເຮົາຢູ່ໃນວັທນະທັມທີ່ທ້າທາຍໃນຄວາມສັມພັນ, ແມ່ນແຕ່ໂທຣະສັບທີ່ສລາດ(Smart Phone)ກໍບໍ່ສາມາດຊ່ວຍໃຫ້ພວກເຮົາຕິດຕໍ່ພົວພັນໃນຄວາມສັມພັນນັ້ນໄດ້ໂດຍແທ້ຈິງ.

ພວກເຮົາໄດ້ອ່ານໃນພຣະຄັມພີໂຢຮັນທີ່ອົງພຣະເຢຊູໃຫ້ແກ່ພວກເຮົາ ເປັນກຸນແຈແຫ່ງຄວາມສັມພັນທີ່ສຳຄັນ. ພຣະອົງຊົງສຳແດງໃຫ້ພວກເຮົາໄດ້ເຫັນວ່າ ຄວາມສັມພັນລະຫວ່າງພວກເຮົາແລະພຣະເຈົ້ານັ້ນມີຜົນກະທົບຕໍ່ຄວາມສັມພັນອື່ນໆໄດ້ຢ່າງໃດ? ຄວາມສັມພັນອັນນັ້ນແມ່ນກຸນແຈຊຶ່ງເຮັດໃຫ້ເຫັນຄວາມແຕກຕ່າງທັງໝົດ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

**ສຶກສາພຣະຄັມພີ**

**1. <u>ໂຢຮັນ 15:9-11</u>:**

*9ຝ່າຍເຮົາໄດ້ຮັກພວກທ່ານຢ່າງນັ້ນເໝືອນກັນ. ຈົ່ງຕັ້ງຢູ່ໃນຄວາມຮັກຂອງເຮົາ.10ຖ້າພວກທ່ານຖືຮັກສາຂໍ້ບັນຍັດຂອງເຮົາທ່ານກໍຈະຕັ້ງຢູ່ໃນຄວາມຮັກຂອງເຮົາ,ເໝືອນດັ່ງເຮົາໄດ້ຖືຮັກສາບັນຍັດພຣະບິດາຂອງເຮົາ ເຮົາຈຶ່ງຕັ້ງຢູ່ໃນຄວາມຮັກຂອງພຣະອົງ. 11ຂໍ້ຄວາມເຫລົ່ານີ້ເຮົາໄດ້ບອກທ່ານທັງຫລາຍແລ້ວ ເພື່ອຄວາມຍິນດີຂອງເຮົາຈະຢູ່ໃນທ່ານແລະຄວາມຍິນດີຂອງທ່ານຈະຄົບບໍຣິບູນ.*

ພຣະຄັມພີ ໂຢຮັນບົດທີ 15 ເຕັມລົ້ນດ້ວຍຄຳເວົ້າທີ່ພວກເຮົາຢາກໄດ້ຍິນໃນສະພາບການຂອງຄວາມສັມພັນ:

"ຮັກ", "ຕັ້ງຢູ່", "ຄວາມຍິນດີ", ແລະ "ມິດສະຫາຍ". ແຕ່ອົງພຣະເຢຊູບໍ່ໄດ້ໃຊ້ຄໍາສັບເຫຼົ່ານີ້ໃນແຕ່ລະຄວາມສໍາພັນ: ພຣະອົງໄດ້ໃຊ້ຄໍາສັບເຫຼົ່ານີ້ກ່ຽວກັບຄວາມສໍາພັນທີ່ດີທີ່ສຸດທີ່ພວກເຮົາສາມາດມີໄດ້ກັບພຣະອົງ. ສັງເກດເຫັນວິທີໃດທີ່ພຣະອົງໄດ້ເລີ່ມຕົ້ນໃນຂໍ້ 9: "ພຣະບິດາໄດ້ຊົງຮັກເຮົາຢ່າງໃດ". ອົງພຣະຄຣິດ, ພຣະເຈົ້າພຣະບຸດ, ມີຄວາມຜູກພັນຢ່າງບໍ່ໜ້າເຊື່ອກັບອົງພຣະບິດາ. ຄວາມສໍາພັນລະຫວ່າງພຣະອົງໄດ້ຖືກກໍານົດໄວ້ດ້ວຍຄວາມສາມັກຄີ, ເປັນເອກະພາບ, ແລະຄວາມຮັກ.

**ສະນັ້ນ, ຈຶ່ງເປັນຄວາມຈິງທີ່ໜ້າອັສຈັນທີ່ໄດ້ຍິນວ່າພຣະເຢຊູຊົງຮັກເຮົາເໝືອນພຣະບິດາຊົງຮັກພຣະອົງ!**

ທ່ານຈະບໍ່ເຄີຍພົບພໍ້ໃຜຜູ້ນຶ່ງທີ່ຮັກທ່ານເໝືອນພຣະເຈົ້າຮັກທ່ານ. ພຣະເຈົ້າຊົງຫຸ້ມເທຄວາມຮັກຂອງພຣະອົງແກ່ເຮົາໂດຍຜ່ານພຣະຄຣິດ. ຄວາມຮັກນີ້ປາສຈາກເງື່ອນໄຂ, ແຕ່ບໍ່ແມ່ນປາສຈາກຄຸນຄ່າລາຄາ. ແທ້ຈິງແລ້ວ, ຄ່າໃຊ້ຈ່າຍຂອງຄວາມຮັກນີ້ແມ່ນການຊົງສລະພຣະຊົນຂອງອົງພຣະເຢຊູ. ການຕອບສນອງຂອງພວກເຮົາຕໍ່ຄວາມຮັກທີ່ຍິ່ງໃຫຍ່ນີ້ເປັນພຽງແຕ່ການເຊື່ອຟັງຢ່າງຢ້ານຢຳແລະໂດຍອັສຈັນໃຈເທົ່ານັ້ນ.

ຂໍ້ທີ 10 ບອກວ່າ "ຖ້າພວກທ່ານຖືຮັກສາຂໍ້ບັນຍັດຂອງເຮົາທ່ານກໍຈະຕັ້ງຢູ່ໃນຄວາມຮັກຂອງເຮົາ." ພຣະເຢຊູບໍ່ໄດ້ເວົ້າວ່າ "ຖ້າຫາກພວກທ່ານເຊື່ອຟັງເຮົາ, ເຮົາຈະຮັກທ່ານສືບຕໍ່ໄປ." ຖ້ອຍຄໍາທີ່ຜິດປໂຍກນີ້(ຕົວຢ່າງ)ຈະເຮັດໃຫ້ຄວາມຮັກຂອງພຣະອົງມີເງື່ອນໄຂ, ແລະຄວາມຮັກທີ່ມີເງື່ອນໄຂເປັນຕົວຢ່າງຂອງສາສນາທີ່ປາສຈາກພຣະຄຸນຂອງພຣະເຈົ້າ. ແທນທີ່ຈະເປັນດັ່ງນັ້ນ, ລໍາດັບທີ່ຖືກຕ້ອງນັ້ນແມ່ນຄວາມເຊື່ອຟັງທີ່ຫຼັ່ງໄຫຼອອກມາຈາກຄວາມຮັກ. ເພາະວ່າພຣະເຈົ້າຊົງຮັກເຮົາ, ພວກເຮົາຕອບສນອງຕໍ່ຄວາມຮັກຂອງພຣະອົງຜ່ານຄວາມເຊື່ອຟັງ. ເວົ້າອີກຢ່າງນຶ່ງ, ພວກເຮົາບໍ່ຈໍາເປັນຈະຮັກສາພຣະບັນຊາຂອງອົງພຣະເຢຊູເພື່ອຈະໄດ້ຮັບຄວາມຮັກຂອງພຣະອົງ ແຕ່ພວກເຮົາຮັກສາພຣະບັນຊາເພື່ອເປັນການຕອບສນອງຕໍ່ຄວາມຮັກຂອງພຣະອົງ.

ກ່ອນອື່ນໝົດ, ຜົນຂອງຄວາມຮັກແລະການເຊື່ອຟັງຂອງພວກເຮົາແມ່ນຄວາມຊົມຊື່ນຍິນດີ, ທັງສອງສໍາລັບອົງພຣະຄຣິດແລະສໍາລັບພວກເຮົາອີກດ້ວຍ.

| |
|---|
| ການເຊື່ອຟັງພຣະບັນຊາຂອງພຣະເຈົ້າສະແດງໃຫ້ເຫັນຄວາມຮັກຂອງພວກເຮົາຕໍ່ພຣະອົງຢ່າງໃດ? |

## 2. <u>ໂຢຮັນ 15:12-13</u>

*[12]"ນີ້ແຫລະ, ເປັນຂໍ້ບັນຍັດຂອງເຮົາ:ຄືໃຫ້ທ່ານທັງຫລາຍຮັກກັນແລະກັນເໝືອນດັ່ງເຮົາໄດ້ຮັກພວກທ່ານ.[13]ບໍ່ມີຜູ້ໃດມີຄວາມຮັກໃຫຍ່ກວ່ານີ້ຄື: ການທີ່ຜູ້ໜຶ່ງຈະໄດ້ສລະຊີວິດຕາງມິດສະຫາຍຂອງຕົນ.*

ພຣະເຈົ້າພຣະບິດາຊົງຮັກພຣະເຈົ້າພຣະບຸດ, ແລະພຣະເຈົ້າພຣະບຸດຊົງຮັກພວກເຮົາ ແຕ່ບໍ່ສິ້ນສຸດພຽງເທົ່ານັ້ນ. ພວກເຮົາຈໍາເປັນຕ້ອງຮັກກັນແລະກັນ, ແລະພວກເຮົາຈໍາເປັນຕ້ອງຮັກກັນໃນທາງດຽວກັນກັບອົງພຣະເຢຊູຊົງຮັກພວກເຮົາ.

ຮັກກັນດັ່ງພຣະເຢຊູຮັກບໍ່ແມ່ນພຽງແຕ່ຍາກ ແຕ່ມັນເປັນໄປບໍ່ໄດ້. ພວກເຮົາບໍ່ສາມາດເຮັດໄດ້ດ້ວຍພລັງຄວາມສາມາດຂອງຕົນເອງ. ແຕ່ອົງພຣະເຢຊູຊົງປ່ຽນແປງພວກເຮົາທັງຂ້າງໃນແລະຂ້າງນອກ. ພຣະອົງຊົງປະທານພຣະວິນຍານບໍຣິສຸດໄວ້ໃນພວກເຮົາ. ແລະພຣະວິນຍານບໍຣິສຸດຊົງນໍາພາພວກເຮົາໃນຄວາມຈິງແລະຊົງໃຫ້ພລັງແກ່ພວກເຮົາໃຫ້ດໍາລົງຊີວິດດ້ວຍຄວາມຈິງນັ້ນ (ເບິ່ງ ໂຢຮັນ 14:26; 16:7; 2 ເປໂຕ 1:3-4). ພວກເຮົາໄດ້ເຫັນຄວາມເລິກຂອງຄວາມຮັກຂອງພຣະເຢຊູທີ່ໃຫ້ແກ່ພວກເຮົາ ໃນຂະນະທີ່ພຣະອົງສະລະພຣະຊົນເທິງໄມ້ກາງແຂນ, ແລະຂໍ້ທີ 13 ໄດ້

ເຕືອນພວກເຮົາໃຫ້ສະແດງຄວາມຮັກຕໍ່ຄົນອື່ນໃນທາງດຽວກັນ. ຕລອດປະຫວັດສາດ, ຊາວຄຣິສຕຽນໄດ້ສມັກໃຈສະລະຊີວິດຂອງຕົນເພື່ອເຫັນແກ່ຂ່າວປະເສີດຂອງພຣະເຢຊູຄຣິດ.

ທຸກວັນນີ້, ພວກເຮົາຍັງເຫັນຄວາມຮັກເຊັ່ນນັ້ນລະຫວ່າງຊາວຄຣິສຕຽນ. ໂລເຣັນ ແຊນເລີເປັນຜູ້ຂຽນແລະເປັນຜູ້ສັງເກດວັດທະນະທັມ. ລາວບໍ່ແມ່ນຄຣິສຕຽນ, ແຕ່ລາວໄດ້ໃຊ້ເວລາຫຼາຍປີດຳລົງຊີວິດແລະສຶກສາຢູ່ຖ້າມກາງຊາວໜຸ່ມໃນອະເມຣິກາທີ່ມີຄວາມເຊື່ອ. ໂລເຣັນ ແຊນເລີ ສັງເກດເຫັນສອງຢ່າງທີ່ຊາວໜຸ່ມມີຄວາມຈຳເປັນໃນປັດຈຸບັນ:

- ຄວາມແນ່ນອນ - ນັ້ນແມ່ນ ຄວາມຈິງຊຶ່ງເປັນສິ່ງເຊື່ອຖື.
- ຄວາມຮັກຊຶ່ງຊາວຄຣິສຕຽນເອີ້ນວ່າ *ຮັກອະມະຕະ*(*agape*).

ອີກເທື່ອນຶ່ງ, ນີ້ແມ່ນຄວາມຮັກປະເພດທີ່ພຣະເຈົ້າໄດ້ຊົງສຳແດງໃຫ້ພວກເຮົາໄດ້ເຫັນ. ແມ້ກະທັ້ງຜູ້ທີ່ບໍ່ຮູ້ຈັກພຣະເຢຊູຍັງຮັບຮູ້ຄວາມຈຳເປັນສຳລັບຄວາມຈິງແລະຄວາມຮັກທີ່ເໜືອກວ່າອາລົມຄວາມຮູ້ສຶກ. ທັງສອງຢ່າງທີ່ສຳຄັນນີ້ໄດ້ຖືກພົບເຫັນຢູ່ໃນຄວາມສັມພັນຕລອດການກັບອົງພຣະຄຣິດ.

| |
|---|
| ການສະແດງຄວາມຮັກຕໍ່ກັນແລະກັນໃນວິຖີທາງຂອງອົງພຣະຄຣິດ ມີລັກສະນະແບບໃດ? |

## 3. ໂຢຮັນ 15:14-17

*14 ຖ້າທ່ານທັງຫລາຍເຮັດຂໍ້ທີ່ເຮົາໄດ້ບັນຍັດໄວ້ພວກທ່ານກໍເປັນມິດສະຫາຍຂອງເຮົາ. 15 ຕໍ່ໄປເຮົາບໍ່ເອີ້ນທ່ານທັງຫລາຍວ່າຂ້ອຍໃຊ້, ເພາະຂ້ອຍໃຊ້ບໍ່ຮູ້ວ່ານາຍຂອງຕົນກຳລັງເຮັດອັນໃດ. ແຕ່ເຮົາເອີ້ນພວກທ່ານວ່າມິດສະຫາຍເພາະວ່າທຸກສິ່ງທີ່ເຮົາໄດ້ຍິນຈາກພຣະບິດາຂອງເຮົາ ເຮົາກໍໄດ້ສະແດງໃຫ້ແກ່ພວກທ່ານຊາບແລ້ວ. 16 ບໍ່ແມ່ນທ່ານທັງຫລາຍໄດ້ເລືອກເອົາເຮົາ, ແຕ່ຝ່າຍເຮົາໄດ້ເລືອກເອົາພວກທ່ານ ແລະໄດ້ແຕ່ງຕັ້ງທ່ານທັງຫລາຍເພື່ອໃຫ້ໄປເກີດຜົນ ແລະເພື່ອຜົນຂອງພວກທ່ານຈະຕັ້ງຢູ່ຖາວອນ, ເພື່ອວ່າເມື່ອທ່ານທັງຫລາຍຈະທູນຂໍສິ່ງໃດຈາກພຣະບິດາໃນນາມຂອງເຮົາ, ພຣະອົງກໍຈະຊົງປະທານສິ່ງນັ້ນແກ່ພວກທ່ານ. 17 ຂໍ້ຄວາມເຫລົ່ານີ້ເຮົາກໍບັນຍັດໄວ້ແກ່ທ່ານທັງຫລາຍເພື່ອພວກທ່ານຈະຮັກກັນແລະກັນ.*

ນີ້ຄືຄວາມຄືບຫນ້າທີ່ພວກເຮົາໄດ້ຮັບການຄຸ້ມຄອງມາເຖິງຕອນນີ້:

- ພວກເຮົາຖືກຮັກໂດຍພຣະເຈົ້າ.
- ພວກເຮົາຕອບສນອງຕໍ່ຄວາມຮັກນັ້ນດ້ວຍການຕິດສນິດຢູ່ກັບພຣະຄຣິດແລະດ້ວຍການເຊື່ອຟັງພຣະອົງ.
- ການເຊື່ອຟັງອັນແນ່ວແນ່ນີ້ ເຮັດໃຫ້ເກີດຄວາມສນິດສນົມກັບພຣະເຢຊູ.
- ພວກເຮົາໄດ້ຖືກນຳເຂົ້າມາຫາຄວາມສັມພັນ ຊຶ່ງພຣະເຢຊູຮ້ອງເຮົາວ່າ ມິດສະຫາຍ.

ລອງຄິດເບິ່ງຈັກບຶດນຶ່ງ: ພຣະເຢຊູເອີ້ນຜູ້ທີ່ຕິດຕາມພຣະອົງວ່າ **ມິດສະຫາຍ!**

ບາດກ້າວຕໍ່ໄປໃນຄວາມຄືບໜ້າແມ່ນການເກີດໝາກຜົນ. ເມື່ອພວກເຮົາດຳລົງຊີວິດສືບຕໍ່ໃນຄວາມສັມພັນກັບອົງພຣະຄຣິດ, ພວກເຮົາຈຳເປັນຕ້ອງມີການເກີດໝາກຜົນ. ນີ້ແມ່ນສິ່ງທີ່ພຣະອົງໄດ້ຊົງບອກພວກເຮົາ (ເບິ່ງ ຂໍ້ 16). ກິ່ງກ້ານທີ່ແຂງແຮງສົມບູນຕ້ອງຕິດສນິດຢູ່ກັບຕົ້ນຕໍແຫ່ງຊີວິດ ຕົ້ນໄມ້ເປັນແຫລ່ງອຳນວຍອາຫານ, ນ້ຳ, ແລະທຸກໆສິ່ງແກ່ງ່າແລະກິ່ງ ດ້ວຍເຫດນີ້, ມັນຈຶ່ງສາມາດຜລິດຫມາກທີ່ມີສຸຂະພາບດີ.

ເມື່ອພວກເຮົາຍ່າງຕາມພຣະເຢຊູ ຕິດສນິດຢູ່ກັບພຣະອົງ, ເຊື່ອຟັງພຣະອົງ, ແລະຮັກໃນວິຖີທາງຂອງພຣະອົງຊີວິດຂອງພວກເຮົາຈະສຳຄັນແລະມີຄວາມໝາຍ. ອີກທາງນຶ່ງທີ່ຄວາມສັມພັນອັນໃກ້ຊິດໄດ້ອອກດອກເກີດຜົນແມ່ນໂດຍຜ່ານການອ້ອນວອນອະທິຖານ. ພຣະຄຳຕອນນີ້ສອນວ່າການຕິດສນິດຢູ່ກັບພຣະຄຣິດນຳພາພວກເຮົາໃຫ້ເຊື່ອ

ຟັງພຣະອົງ.

ທຸກສິ່ງທຸກຢ່າງແມ່ນກັບມາກ່ຽວພັນກັບເຣື່ອງ**ຄວາມຮັກ**. ຄໍາອະທິຖານຂອງພວກເຮົາເປັນພື້ນຖານໃນຄວາມຮັກຂອງພວກເຮົາທີ່ມີຕໍ່ພຣະເຈົ້າ, ແລະສິ່ງທີ່ພວກເຮົາທູນຂໍແມ່ນແຮງດົນໃຈຈາກຄວາມຮັກຂອງພວກເຮົາທີ່ມີຕໍ່ຄົນອື່ນ.

ພວກເຮົາທຸກຄົນມີຄວາມປາຖນາໃນຄວາມສັມພັນທີ່ແທ້ຈິງກັບຄົນອື່ນ. ແຕ່ນັ້ນຕ້ອງລິເລີ້ມຈາກຄວາມສັມພັນຂອງພວກເຮົາກັບອົງພຣະຄຣິດກ່ອນ. ຈົ່ງປ່ອຍໃຫ້ຄວາມຮັກຂອງພຣະອົງເຕັມລົ້ນກາຍແລະຈິດໃຈຂອງທ່ານກ່ອນ, ແລ້ວຈຶ່ງໄຫຼຫຼັ່ງອອກຈາກທ່ານໄປສູ່ຄວາມຮັກສໍາລັບຄົນອື່ນ. ຫຼັງຈາກນັ້ນຄວາມສັມພັນທັງໝົດຂອງທ່ານຈຶ່ງຈະມີຄຸນນະພາບແລະຄວາມເລິກເຊິ່ງຕາມຄວາມປາຖນາຂອງທ່ານ. ຜົນຕາມມາກໍຄື ທ່ານຈະເກີດໝາກຜົນໃນທຸກໆຄວາມສັມພັນ ໝາກຜົນທີ່ຈະດໍາຣົງຢູ່ໃນຊີວິດຂອງຄົນອື່ນ ແລະຈະນໍາພຣະກຽດມາສູ່ອົງພຣະຜູ້ເປັນເຈົ້າຂອງພວກເຮົາ.

| |
|---|
| ທ່ານໄດ້ເຫັນພຣະຄໍາຕອນນີ້ມີການປະຕິບັດຢູ່ພາຍໃນຄຣິສຕຈັກຂອງທ່ານຢ່າງໃດ ? |

## ນໍາໃຊ້ໃນຊີວິດ

ທ່ານຈະປ່ອຍໃຫ້ຄວາມຮັກອັນປາສຈາກເງື່ອນໄຂຂອງອົງພຣະຄຣິດສົ່ງຜົນກະທົບຕໍ່ທ່ານແລະຕໍ່ຄວາມສັມພັນຂອງທ່ານຢ່າງໃດໃນອາທິດນີ້? ຈົ່ງພິຈາລະນາເບິ່ງຄໍາແນະນໍາດັ່ງຕໍ່ລົງໄປນີ້:

- **ສະທ້ອນຄືນຫຼັງ.**ຈົ່ງໃຊ້ເວລາທວນຄືນຄິດເຖິງປະສົບການຂອງທ່ານກັບອົງພຣະເຢຊູຄຣິດ ຈົດບັນທຶກໄວ້ຢ່າງໜ້ອຍສາມເຫດຜົນວ່າ ດ້ວຍເຫດໃດການເຊື່ອຟັງພຣະຄຣິດຈຶ່ງນໍາມາຊຶ່ງຄວາມຊົມຊື່ນຍິນດີແກ່ທ່ານ.

- **ອ່ານ.** ຈົ່ງອ່ານພຣະທັມ ໂຢຮັນ ບົດທີ 15 ຂໍ້ 9-17 ທຸກໆວັນແລະບັນທຶກໄວ້ວ່າເນື້ອໃນໃຈຄວາມຂອງພຣະຄໍາຕອນນີ້ເວົ້າເຖິງຄວາມສັມພັນຂອງທ່ານທີ່ມີຕໍ່ພຣະເຈົ້ານັ້ນແມ່ນຫຍັງ. ທູນຂໍຕໍ່ພຣະເຈົ້າໃຫ້ຊົງປະທານມຸມມອງທັສນະໃໝ່ໆແກ່ທ່ານແຕ່ລະວັນ ແລະຊ່ວຍທ່ານໃຫ້ຈົດຈໍ່ສຸມໃຈໃສ່ພຣະອົງ.

- **ແບ່ງປັນ.** ຈົ່ງສແວງຫາຊ່ອງທາງໃນອາທິດນີ້ທີ່ທ່ານສາມາດນໍາຄວາມຊື່ນຊົມຍິນດີມາສູ່ຄົນອື່ນ ໃນທີ່ທໍາງານ, ໃນຄອບຄົວ, ໃນໂຮງຮຽນ, ໃນຄຸ້ມບ້ານຂອງທ່ານ. ການນໍາຄວາມຊື່ນຊົມຍິນດີມາສູ່ຄົນອື່ນແມ່ນວິຖີທາງທີ່ສະແດງອອກເຖິງຄວາມຮັກຂອງພຣະຄຣິດ, ແລະມັນຈະເປັນການປູເສັ້ນທາງເພື່ອໂອກາດທີ່ຈະໃຫ້ພວກເຮົາໄດ້ປະກາດຂ່າວປະເສີດຂອງອົງພຣະຄຣິດແກ່ຄົນທັງຫລາຍ.

ການປ່ຽນແປງໃນດ້ານເທກໂນໂລຍີ ຈະບໍ່ປ່ຽນແປງຄວາມສັມພັນຂອງພວກເຮົາ ບໍ່ແມ່ນໃນທາງທີ່ມີຄວາມໝາຍແຕ່ຢ່າງໃດ. ກົງກັນຂ້າມ, ຄວາມສັມພັນຂອງພວກເຮົາຈະມີສຸຂະພາບດີຂຶ້ນ ເມື່ອຖືກສ້າງຕັ້ງຂຶ້ນຈາກຄວາມສໍາພັນຂອງພວກເຮົາກັບອົງພຣະເຢຊູຄຣິດ.